ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 243/ທຫລ

ທະນາຄານແຫ່ງ ສປປ ລາວ

ນະຄອນຫຼວງວຽງຈັນ, ວັນທີ 05 AUG 2013

# ແຈ້ງການ

ເຖິງ: ບັນດາທະນາຄານທຸລະກິດລັດ, ລັດຮຸ້ນສ່ວນ, ທະນາຄານເອກະຊົນ, ທະນາຄານສາຂາຕ່າງປະເທດ.

ເລື່ອງ: ການຂາຍເງິນຕາຕ່າງປະເທດໃຫ້ແກ່ສັງຄົມ

- ອີງຕາມລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008 ແລະ ບົດແນະນຳການຈັດຕັ້ງປະຕິບັດລັດຖະບັນຍັດ ສະບັບເລກທີ 01/ທຫລ, ລົງວັນທີ 02 ເມສາ 2010.

**ທະນາຄານແຫ່ງ ສປປ ລາວ ອອກແຈ້ງການ ດັ່ງນີ້:**

1. ການຂາຍເງິນຕາຕ່າງປະເທດໃຫ້ແກ່ສັງຄົມ ໃນວົງເງິນສູງສຸດບໍ່ເກີນ 20 ລ້ານກີບທຽບເທົ່າ ໂດຍໃຫ້ທະນາຄານທຸລະກິດ ໃຊ້ດຸນພິນິດໃນການພິຈາລະນາອະນຸມັດ, ພ້ອມທັງ ສຳເນົາບັດປະຈຳຕົວໄວ້ເປັນຫຼັກຖານ;
2. ການຂາຍເງິນຕາຕ່າງປະເທດ ທີ່ມີວົງເງິນເກີນ 20 ລ້ານກີບທຽບເທົ່າ ຕ້ອງປະຕິບັດຕາມມາດຕາ 5 ຂອງບົດແນະນຳການຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ທຫລ, ລົງວັນທີ 02 ເມສາ 2010 ຢ່າງເຂັ້ມງວດ;
3. ການສະເໜີຊື້ເງິນຕາຕ່າງປະເທດ ຂອງທະນາຄານທຸລະກິດ ຈາກ ທຫລ ຕ້ອງມີເອກະສານລາຍງານການຂາຍເງິນຕາຕ່າງປະເທດ ໃຫ້ແກ່ລູກຄ້າທີ່ມີວົງເງິນເກີນ 20 ລ້ານກີບທຽບເທົ່າ ຂອງມື້ຖັດມາ ແລະ ຕ້ອງແມ່ນຄະນະອຳນວຍການທະນາຄານທຸລະກິດ ເປັນຜູ້ລົງລາຍເຊັນ;
4. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການ ສະບັບເລກທີ 96/ທຫລ, ລົງວັນທີ 26 ມີນາ 2013 ແລະ ລະບຽບການໃດທີ່ຂັດກັບແຈ້ງການສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ

ດຣ. ສົມພາວ ໄຟສິດ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la